ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຄຳມ່ວນ
ຄະນະປະຈຳ

ເລກທີ.150..../ຄປຈ.ສພຂ
ຄຳມ່ວນ, ວັນທີ 21.ທັນວາ.2021

ມະຕິ
ວ່າດ້ວຍການຮັບຮອງເອົາບັດຂອງສະມາຊິກສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015.
- ອີງຕາມ ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບບັດສະມາຊິກສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 13/ຄປຈ ລົງວັນທີ 26/11/2021.
- ອີງຕາມ ມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ, ສະບັບເລກທີ 145/ຄປຈ.ສພຂ, ລົງວັນທີ 20 ທັນວາ 2021.

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຕົກລົງ:

ມາດຕາ 1 ຮັບຮອງເອົາບັດສະມາຊິກສະພາປະຊາຊົນແຂວຄຳມ່ວນ ເປັນຮູບສີ່ເຈສາກ, ມີຂະໜາດກວ້າງ 6,5 ຊັງຕີແມັດ, ຍາວ 10 ຊັງຕີແມັດ ແລະ ພື້ນສີຟ້າອ່ອນ ຕິດໜັງສືສີຂາວ.

ມາດຕາ 2 ບັດສະມາຊິກສະພາປະຊາຊົນແຂວງຄຳມ່ວນ ປະກອບມີເນື້ອໃນດັ່ງນີ້:


+ ດ້ານໜ້າຂອງບັດ ປະກອບມີເນື້ອໃນຄື:
- ເຄື່ອງໝາຍສະພາປະຊາຊົນຂັ້ນແຂວງ;
- ເລກທີ;
- ຮູບຕິດບັດຂະໜາດ 2 x 2,5 ຊັງຕີແມັດ;
- ຊື່ ແລະ ນາມສະກຸນ;
- ວັນເດືອນປີເກີດ;
- ຖິ່ນກຳເນີດ;
- ສະມາຊິກສະພາປະຊຸມຂັ້ນແຂວງ ປະຈຳເຂດເລືອກຕັ້ງເມືອງ;
- ປ່ອນອອກບັດ (ການຈັດຕັ້ງທີ່ອອກບັດ);
- ວັນທີເດືອນປີ;
- ປະທັບຕາ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.


ສແກນດ້ວຍ CamScanner

+ ດ້ານຫຼັງຂອງບັດແມ່ນຄຳແນະນຳໃນການນຳໃຊ້ບັດ ປະກອບມີເນື້ອໃນ ດັ່ງນີ້:

- ບັດນີ້ອອກໃຫ້ສະເພາະ ຜູ້ເປັນສະມາຊິກສະພາປະຊາຊົນແຂວງຄຳມ່ວນ ເທົ່ານັ້ນ, ມີສິດ ແລະ ອະນຸສິດ ຕາມທີ່ກຳນົດໄວ້ໃນກົດໝາຍ;
- ຫ້າມເອົາບັດນີ້ໃຫ້ຜູ້ອື່ນຢືມ,ປ່ຽນກັນນຳໃຊ້,ປອມແປງ ແລະ ນຳໃຊ້ໄປໃນທາງທີ່ບໍ່ຖືກຕ້ອງເດັດຂາດ;
- ສະມາຊິກສະພາປະຊາຊົນແຂວງຄຳມ່ວນ ສາມາດແຈ້ງບັດນີ້ຕໍ່ທຸກອົງການຈັດຕັ້ງ ແລະ ເຈົ້າໜ້າທີ່ ທຸກຂັ້ນ ເພື່ອຈຸດປະສົງໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ;
- ກໍລະນີບັດຕົກເຮ່ຍເສຍຫາຍ ຫຼື ໃຊ້ການບໍ່ໄດ້ ຕ້ອງແຈ້ງໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຮັບຊາບ ເພື່ອອອກບັດໃໝ່ໃຫ້;
- ບັດນີ້ມີອາຍຸການນຳໃຊ້ 5 ປີ ເທົ່າກັບອາຍຸການຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດນັ້ນ.

+ ດ້ານຮູບແບບ (ດ້ານໜ້າ) (ດ້ານຫຼັງ)





ມາດຕາ 3 ບັນດາອົງການຈັດຕັ້ງພັກ-ລັດ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ພາກສ່ວນທີ່ກ່ຽວຂ້ອງ, ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງ ເຂັ້ມງວດ.

ມາດຕາ 4 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕາງໜ້າ ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ
ປະທານ

ສແກນດ້ວຍ CamScanner